# ໂທລະເລກອວຍພອນ

**ເຖິງ: ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ**

<u>ທີ່ ນະຄອນຫຼວງຮ່າໂນ້ຍ</u>

ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດ ຫວຽດນາມ ທີ່ມີກຽດສະຫງ່າ ຄົບຮອບ 94 ປີ, ໃນນາມ ຄະນະບໍລິຫານສູນກາງພັກປະຊາຊົນ ປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວ, ພວກຂ້າພະເຈົ້າ ຂໍ ສົ່ງຄຳອວຍພອນໄຊອັນປະເສີດ, ໄມຕີຈິດມິດຕະພາບ ແລະ ຄວາມສາມັກຄີຮັກແພງອັນສະໜິດສະໜົມ ຖານ ສະຫາຍອ້າຍນ້ອງ ມາຍັງ ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ, ສະມາຊິກພັກ ແລະ ປະຊາ ຊົນ ຫວຽດນາມ ອ້າຍນ້ອງທຸກຖ້ວນໜ້າ.

ຕະຫຼອດໄລຍະ 94 ປີ ຜ່ານມາ, ພັກກອມມູນິດ ຫວຽດນາມ ໄດ້ນຳພາ ພາລະກິດປະຕິວັດ ຢ່າງ ອົງອາດກ້າແກ່ນ ແລະ ປະດິດສ້າງ ດ້ວຍການວາງແນວທາງທີ່ຖືກຕ້ອງ, ສະຫຼາດສ່ອງໃສ ແລະ ໄດ້ນຳພາປະຊາ ຊົນ ຫວຽດນາມ ວິລະຊົນ ຍາດໄດ້ໄຊຊະນະອັນເປັນປະຫວັດການໃນການຕໍ່ສູ້ປົດປ່ອຍຊາດ, ທ້ອນໂຮມປະ ເທດຊາດ ຢ່າງສົມບູນໃນປີ 1975 ແລະ ມາໃນໄລຍະໃໝ່, ພັກກອມມູນິດ ຫວຽດນາມ ໄດ້ສືບຕໍ່ນຳພາ ພາລະ ກິດສ້າງສາ ແລະ ປົກປັກຮັກສາປະເທດຊາດ ຫວຽດນາມ ຕາມທິດສັງຄົມນິຍົມ, ໂດຍສະເພາະແມ່ນ ໃນໄລຍະ ເກືອບ 40 ປີ ແຫ່ງການປະຕິບັດແນວທາງການປ່ຽນແປງໃໝ່, ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ ຮອບດ້ານ ແລະ ມີຄວາມໝາຍສຳຄັນທາງປະຫວັດສາດ, ອັນໄດ້ເຮັດໃຫ້ປະເທດຊາດ ຫວຽດນາມ ມີສະຖຽນ ລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດມີການພັດ ທະນາດ້ວຍຈັງຫວະສູງຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການ ຍົກສູງຂຶ້ນຢ່າງເດັ່ນຊັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ການພົວພັນຕ່າງ ປະເທດ ໄດ້ຮັບການເປີດກວ້າງ, ບົດບາດອິດທິພົນຂອງ ພັກກອມມູນິດ ຫວຽດນາມ ແລະ ສາທະລະນະລັດ ສັງຄົມນິຍົມ ຫວຽດນາມ ນັບມື້ນັບໄດ້ຮັບການເຊີດຊູສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ໃນຖານະສະຫາຍອ້າຍນ້ອງ ທີ່ສະໜິດສະໜົມ, ພັກປະຊາຊົນ ປະຕິວັດລາວ ແລະ ປະຊາຊົນລາວ ຂໍສະ ແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ຜົນສຳເລັດ ແລະ ໄຊຊະນະອັນໃຫຍ່ຫຼວງຮອບດ້ານທີ່ ພັກກອມມູນິດ ຫວຽດນາມ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງຍາດມາໄດ້ ຕະຫຼອດໄລຍະ 94 ປີ ທີ່ຜ່ານມາ ແລະ ຍາມ ໃດກໍ່ຖືຜົນສຳເລັດດັ່ງກ່າວ ເປັນບົດຮຽນອັນລ້ຳຄ່າ, ເປັນສິ່ງປຸກລະດົມກຳລັງໃຈອັນແຮງກ້າໃນການປະຕິບັດ ສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກຂ້າພະເຈົ້າ ແລະ ເຊື່ອໝັ້ນ ຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນປີຊາສາມາດ ແລະ ສະຫຼາດສ່ອງໃສ ຂອງພັກກອມມູນິດ ຫວຽດ

ນາມ ອັນມີ ສະຫາຍ ເລຂາທິການໃຫຍ່ ທາງວຽນຟູຈ້ອງ ເປັນແກນກາງນັ້ນ, ປະຊາຊົນຫວຽດນາມ ອ້າຍນ້ອງ ຈະສືບຕໍ່ຍາດໄດ້ໄຊຊະນະ ແລະ ຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ, ສ້າງໃຫ້ ຫວຽດນາມ ກາຍເປັນປະເທດ ອຸດສະຫະກຳທີ່ທັນສະໄໝ, ບັນລຸເປົ້າໝາຍ ປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ພວກຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ຫວຽດນາມ ທີ່ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ທີ່ແສນເຄົາລົບຮັກ ເປັນຜູ້ລິເລີ່ມ ແລະ ໄດ້ຜ່ານການທົດສອບໃນແປວໄຟປະຕິວັດ ມາເປັນເວລາຫຼາຍທົດສະວັດນັ້ນ ໄດ້ກາຍເປັນມູນມໍລະດົກລວມອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງສອງຊາດ, ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະຂອງການປະຕິວັດ ຢູ່ແຕ່ລະປະເທດ ແລະ ມາເຖິງປັດຈຸບັນ ຍິ່ງໄດ້ຮັບການເອົາໃຈໃສ່, ຖະນຸຖະໜອມ, ເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍເຂົ້າສູ່ລວງເລິກໃນທຸກຂົງເຂດ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນລ້ຳຄ່າ, ໃຫຍ່ຫຼວງ, ມີປະສິດທິຜົນ ແລະ ທັນການແກ່ພາລະກິດການປະຕິວັດລາວ ໃນຕະຫຼອດໄລຍະຜ່ານມາ ບົນຈິດໃຈບໍລິສຸດຜຸດຜ່ອງຖານສະຫາຍອ້າຍນ້ອງ.

ພັກ, ລັດ ແລະ ປະຊາຊົນລາວ ພວກຂ້າພະເຈົ້າ ຈະສືບຕໍ່ຮ່ວມກັບ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ເຮັດສຸດຄວາມສາມາດຂອງຕົນ ເພື່ອສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນທີ່ຫາຍາກດັ່ງກ່າວ ໃຫ້ໝັ້ນຄົງ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດລວມຂອງສອງຊາດ, ກໍ່ຄືເພື່ອປະກອບສ່ວນເຂົ້າໃນພາລະກິດເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ຂຽວສົດງົດງາມຕະຫຼອດໄປ.

ນະຄອນຫຼວງວຽງຈັນ, ວັນທີ 02 ກຸມພາ 2024

**ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ**